ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 24 ຫາ 28 ກຸມພາ 2025




ພິທີເຊັນບົດບັນທຶກຄວາມເຂົ້າໃຈ ກ່ຽວກັບການເຊື່ອມສານລະບົບຖານຂໍ້ມູນການພົ້ນທຸກ ແລະ ພັດທະນາ ເຂົ້າກັບລະບົບຂໍ້ມູນປະຊາກອນທີ່ເກີດສິດໃນການໃຊ້ບໍລິການສາທາລະນະສຸກ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ພິທີເຊັນບົດບັນທຶກຄວາມເຂົ້າໃຈ ກ່ຽວກັບການເຊື່ອມສານລະບົບຖານຂໍ້ມູນການພົ້ນທຸກ ແລະ ພັດທະນາ ເຂົ້າກັບລະບົບຂໍ້ມູນປະຊາກອນ ທີ່ເກີດສິດໃນການໃຊ້ບໍລິການສາທາລະນະສຸກ

ພາບ-ຂ່າວໂດຍ:ພະແນກໂຄສະນາ ແລະ ຂ່າວສານ

ໃນວັນທີ 10 ກຸມພາ 2025 ທີ່ກະຊວງສາທາລະນະສຸກ ໄດ້ມີພິທີລົງນາມບົດບັນທຶກຄວາມເຂົ້າໃຈ ກ່ຽວກັບ ການເຊື່ອມສານລະບົບຖານຂໍ້ມູນການພົ້ນທຸກ ແລະ ພັດທະນາ ເຂົ້າກັບລະບົບຂໍ້ມູນປະຊາກອນທີ່ເກີດສິດ ໃນການໃຊ້ບໍລິການສາທາລະນະສຸກ ລະຫວ່າງ ຫ້ອງການປະກັນສຸຂະພາບແຫ່ງຊາດ ກະຊວງສາທາລະນະສຸກ ແລະ ກົມພັດທະນາຊົນນະບົດ ກະຊວງກະສິກຳ ແລະ ປ່າໄມ້ ໃນພິທີທ່ານ ປອ ດຣ ພູວັງ ສຸ້ຍຍະວົງ ຫົວໜ້າຫ້ອງການປະກັນສຸຂະພາບແຫ່ງຊາດ ໄດ້ລາຍງານໃຫ້ຮູ້ວ່າ ວຽກດັ່ງກ່າວເປັນວຽກໜຶ່ງທີ່ມີຄວາມສຳຄັນ ເພື່ອຊ່ວຍສ້າງເງື່ອນໄຂໃຫ້ທຸກຄົນໄດ້ເຂົ້າເຖິງການບໍລິການປິ່ນປົວສຸຂະພາບ ໄລຍະຜ່ານມາການເຂົ້າເຖິງການບໍລິການປິ່ນປົວສຸຂະພາບຂອງຄົນເຈັບທຸກຍາກ ຖືວ່າຢູ່ໃນເກນທີ່ຕໍ່າຫຼາຍ, ສະຖິຕິປີ 2023 ຂອງຫ້ອງການປະກັນສຸຂະພາບແຫ່ງຊາດ ມີອັດຕາຊົມໃຊ້ບໍລິການກວດເຂດນອກຂອງຄົນເຈັບທຸກຍາກ ກວມ 2.1 % ແລະ ມີພຽງ 0.6 % ສຳລັບນອນໂຮງໝໍ ທຽບໃສ່ສະມາຊິກພາກປະຊາຊົນຂອງກອງທຶນປະກັນສຸຂະພາບແຫ່ງຊາດ ຊຶ່ງເກີດຂຶ້ນໄດ້ຫຼາຍສາຍເຫດ ຊຶ່ງການທີ່ບໍ່ອອກບັດໃຫ້ຄົນທຸກຍາກ ກໍ່ເປັນໜຶ່ງສາຍເຫດເຫຼົ່ານັ້ນ ເຮັດໃຫ້ຄົນທຸກຍາກບໍ່ແນ່ໃຈວ່າຕົນເອງຈະໄດ້ຮັບການບໍລິການປິ່ນປົວບໍ່ເສຍຄ່າ ເວລາໄປໂຮງໝໍ, ໃນເດືອນຕຸລາປີ 2023 ຫ້ອງການປະກັນສຸຂະພາບແຫ່ງຊາດ ໄດ້ມີຄວາມພະຍາຍາມທີ່ຈະອອກບັດປະກັນສຸຂະພາບໃຫ້ຄອບຄົວທຸກຍາກ ທີ່ມີມາດຕະຖານຄອບຄົວພົ້ນທຸກຕໍ່າກວ່າ 4 ມາດຕະຖານ ຢູ່ 17 ແຂວງ ໂດຍນຳໃຊ້ຂໍ້ມູນຈາກຜົນການສຳຫຼວດລ່າສຸດຂອງກົມພັດທະນາຊົນນະບົດ ປີ 2022 ທັງນີ້ກໍ່ເພື່ອເປັນການຜັນຂະຫຍາຍກົດໝາຍວ່າດ້ວຍການປະກັນສຸຂະພາບ ເລກທີ 60/ສພຊ ຊຶ່ງຈະຊ່ວຍໃຫ້ຄົນທຸກຍາກ ມີຄວາມໝັ້ນໃຈວ່າຕົນຈະໄດ້ຮັບການປິ່ນປົວ ອີກຢ່າງກໍ່ເປັນບ່ອນອີງໃຫ້ໂຮງໝໍ ໃນການ




ກວດສິດເພື່ອປະຕິບັດນະໂຍບາຍຂອງກອງທຶນປະກັນສຸຂະພາບ ຕໍ່ກັບຄົນເຈັບທຸກຍາກ ເດືອນຕຸລາ ປີ 2024 ໄດ້ສຳເລັດການແຈກຢາຍບັດປະກັນສຸຂະພາບ ໃຫ້ຄອບຄົວທຸກຍາກ ຢູ່ 17 ແຂວງ ແລະ ຊີ້ເປົ້າປະກັນໃຫ້ຄອບຄົວທຸກຍາກ ຢູ່ນະຄອນຫຼວງວຽງຈັນ ເຫັນວ່າສາມາດຂຶ້ນທະບຽນໄດ້ 86.5% ໃນນີ້ຄອບຄົວທຸກຍາກ 63%, ບໍ່ແມ່ນຄອບຄົວທຸກຍາກ 37% ຊຶ່ງໄດ້ຕັດອອກຈາກຖານຂໍ້ມູນ ຄອບຄົວທຸກຍາກ ແລະ ຕົກຫຼົ່ນ 13.5% ຊຶ່ງແມ່ນຄອບຄົວທຸກຍາກ ແຕ່ບໍ່ມີປຶ້ມສຳມະໂນຄົວ ຈຶ່ງບໍ່ຖືກປະເມີນ ແລະ ບໍ່ໄດ້ຖືກຈັດເຂົ້າໃນຖານຂໍ້ມູນ ສຳລັບກຸ່ມນີ້ຕ້ອງໄດ້ສືບຕໍ່ອອກບັດໃຫ້ ເພື່ອຊ່ວຍໃຫ້ເຂົາເຈົ້າໄດ້ເຂົ້າເຖິງການບໍລິການປິ່ນປົວສຸຂະພາບໂດຍປາສະຈາກພາລະແບກຫາບທາງດ້ານການເງິນ, ການເຊັນລົງນາມບົດບັນທຶກສອງຝ່າຍຄັ້ງນີ້ ຈະເປັນບ່ອນອີງທີ່ສຳຄັນໃນການອອກບັດປະກັນສຸຂະພາບໃຫ້ຄອບຄົວຕົກຫຼົ່ນ ແລະ ຄອບຄົວທີ່ທຸກຍາກ ແນໃສ່ໃຫ້ໄດ້ຮັບການປະຕິບັດນະໂຍບາຍ ຂອງກອງທຶນປະກັນສຸຂະພາບແຫ່ງຊາດ, ໃນພິທີລົງນາມ ຕາງໜ້າກະຊວງກະສິກຳ ແລະ ປ່າໄມ້ ເຊັນໂດຍ ທ່ານ ບົວທົງ ຄຳຫາ ຫົວ ໜ້າກົມພັດທະນາຊົນນະບົດ ແລະ ກະຊວງສາທາລະນະສຸກ ໂດຍ ທ່ານ ປອ ດຣ ພູວັງ ສຸ້ຍຍະວົງ ຫົວໜ້າຫ້ອງການປະກັນສຸຂະພາບແຫ່ງຊາດ ໂດຍເປັນກຽດເຂົ້າຮ່ວມເປັນສັກພິຍານຂອງ ທ່ານ ປອ ລິນຄຳ ດວງສະຫວັນ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້, ທ່ານ ດຣ ບຸນແຝງ ພູມມະໄລສິດ ລັດຖະມົນຕີກະຊວງສາທາລະນະສຸກ ພ້ອມດ້ວຍ ຫົວໜ້າຮອງຫົວໜ້າກົມ, ຫົວໜ້າຮອງຫົວໜ້າຫ້ອງການ ແລະ ວິຊາການ ຈາກພາກສ່ວນທີ່ກ່ຽວຂ້ອງຂອງທັງສອງຝ່າຍເຂົ້າຮ່ວມ.

ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອນດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໂຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;